# ປະເມີນຫຼັກສູດ ການແພດ ຄະນະແພດສາດ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ນະຄອນຫຼວງວຽງຈັນ ໂດຍການໃຊ້ຊິບໂມເດວ

ບຸນໂຊງ ຂັນທະໄຊ[1], ຄຳແສງ ທະລັງສີ[2], ຄຳເມີງ ສີບຸນເຮືອງ[2], ວັນເພັງ ຈັນໂພທອງ[1]

1. ສະຖາບັນຄົ້ນຄວ້າ ແລະ ພັດທະນາການສຶກສາ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ, ສປປ ລາວ
2. ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດລາວ, ນະຄອນຫຼວງວຽງຈັນ, ສປປ ລາວ

ໄດ້ຮັບຕົ້ນສະບັບ ທີ 12 ພະຈິກ 2021, ໄດ້ຮັບບົດທີ່ກວດແກ້ຄືນ ທີ 9 ມິຖຸນາ 2022, ເຫັນດີໃຫ້ຈັດພິມ 15 ກັນຍາ 2022

## ບົດຄັດຫຍໍ້

**ຄວາມເປັນມາ ແລະ ຄວາມສຳຄັນ:** ການພັດທະນາຄົນໃຫ້ມີຄຸນນະພາບນັ້ນເປັນໜ້າທີ່ຕົ້ນຕໍ ຂອງລະບົບການສຶກສາ ຊຶ່ງແມ່ນຂະບວນການກໍ່ສ້າງໃຫ້ຄົນມີຄວາມຮູ້ຄວາມສາມາດ, ມີທັກສະ, ມີສະຕິປັນຍາ, ສາມາດໄຈແຍກວິເຄາະ, ຮູ້ຈັກແກ້ໄຂບັນຫາ, ສາມາດຮຽນຮູ້ດ້ວຍຕົນເອງ ໃນນັ້ນຍັງສາມາດປັບຕົວທັນກັບການປ່ຽນແປງທີ່ເກີດຂຶ້ນໃນສະພາບແວດລ້ອມ ຂອງພາກພື້ນ - ສາກົນ.

**ຈຸດປະສົງ:** ຈຸດປະສົງເພື່ອປະເມີນຄວາມສອດຄ່ອງດ້ານບໍລິບົດ, ດ້ານປັດໃຈນຳເຂົ້າ, ດ້ານຂະບວນການ ແລະ ດ້ານຜົນຜະລິດ ຂອງຫຼັດສູນແພດສາດ ຄະນະແພດສາດ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ໂດຍໃຊ້ຮູບແບບການປະເມີນແບບ CIPP Model.

**ວິທີວິດທະຍາ:** ການສຶກສາຄັ້ງນີ້ ໃນຮູບແບບພັນລະນາມະຈຸດເວລາໃດໜຶ່ງ (Cross-sectional descriptive study), ການເກັບຂໍ້ມູນແມ່ນໃຊ້ແບບຟອມສອບຖາມສຳພາດເຊິ່ງໜ້າ, ເຂົ້າຂໍ້ມູນໂດຍໂປຼແກມ Epi-data ແລະ ວິເຄາະຂໍ້ມູນໂດຍໃຊ້ໂປຼແກມ SPSS.

**ຜົນການສຶກສາ:** 1). ດ້ານບໍລິບົດ ເຫັນວ່າ: ປັດສະຍາຫຼັກສູດ, ຈຸດປະສົງຂອງຫຼັກສູດ, ດ້ານໂຄງສ້າງຂອງຫຼັກສູດ ແລະ ເນື້ອໃນຂອງຫຼັກສູດແຕ່ລະລາຍວິຊາ ມີຄວາມສອດຄ່ອງຢູ່ໃນລະດັບຫຼາຍ, 2). ດ້ານປັດໃຈນຳເຂົ້າ ເຫັນວ່າ: ດ້ານການສອນ, ດ້ານນັກສຶກສາ ແລະ ດ້ານອຸປະກອນການຮຽນ - ການສອນ, ຕຳລາຮຽນ ແລະ ສະຖາທີ່ຮຽນ ມີຄວາມສອດຄ່ອງໃນລະດັບປານກາງ, 3). ດ້ານຂະບວນການ ເຫັນວ່າ: ການບໍລິຫານຫຼັກສູດ, ການຈັດການຮຽນ - ການສອນ, ການວັດ ແລະ ການປະເມີນຜົນ ມີຄວາມສອດຄ່ອງໃນລະດັບຫຼາຍ ແລະ 4). ດ້ານຜົນຜະລິດ ເຫັນວ່າ: ດ້ານພຶດຕິກຳ, ທັດສະນະຄະຕິ, ຄຸນນະທຳ ແລະ ຈາລິຍະທຳແຫ່ງວິຊາຊີບ, ດ້ານທັກສະໃນການສື່ສານ ແລະ ສ້າງຄວາມສຳພັນ, ຄວາມຮູ້ພື້ນຖານ, ທັກສະທາງດ້ານຄຼີນິກ, ທັກສະດ້ານການກວດພະຍາດໂດຍໃຊ້ເຄື່ອງມືພື້ນຖານ ແລະ ການພັດທະນາຄວາມຮູ້ທາງວິຊາຊີບ ມີຄວາມສອດຄ່ອງໃນລະດັບຫຼາຍ.

**ສະຫຼຸບ:** ຫຼັກສູດການແພດ ຄະນະແພດສາດ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ມີຄວາມສອດຄ່ອງຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າ: ດ້ານບໍລິບົດ, ດ້ານຂະບວນການ ແລະ ດ້ານຜົນຜະລິດ ມີຄວາມສອດຄ່ອງຢູ່ໃນລະດັບຫຼາຍ. ສ່ວນດ້ານປັດໃຈນຳເຂົ້າມີຄວາມສອດຄ່ອງຢູ່ໃນລະດັບປານກາງ.

**ຄຳສັບຫຼັກ:** ການປະເມີນຫຼັກສູດ, ຮູບແບບຊິບໂມເດວ, ຄະນະແພດສາດ

***ຕິດຕໍ່ຜູ້ຂຽນ:** ບຸນໂຊງ ຂັນທະໄຊ, ໂທລະສັບ: +85620 5546 2869, E-mail: tuytip25@gmail.com

## ບົດນຳ

ລັດຖະບານແຫ່ງ ສປປ ລາວ ໄດ້ຕັ້ງເປົ້າໝາຍການພັດທະນາປະເທດຊາດ ໃຫ້ຫຼຸດພົ້ນອອກຈາກການເປັນປະເທດດ້ອຍພັດທະນາໃນປີ 2024 ເພື່ອຍັບເຂົ້າສູ່ພາກພື້ນສາກົນ. ກາຍເປັນປະເທດອຸດສາຫະກຳທັນສະໄໝຕາມວິໄສທັດການພັດທະນາຊັບພະຍາກອນມະນຸດ ແລະ ເປົ້າໝາຍການພັດທະນາແບບຍືນຍົງໃນປີ 2030 (SDGs) ຮັບປະກັນໃຫ້ທຸກເພດທຸກໄວ ໃຫ້ມີສຸຂະພາບແຂງແຮງ ແລະ ຢູ່ດີກິນດີທົ່ວໜ້າ "Ensure Healthy live and Promote well-being for all at all age" (ກະຊວງສາທາລະນະສຸກ, 2014).

ນະໂຍບາຍການຮຽນຮູ້ຕະຫຼອດຊີວິດ ຂອງ ສປປ ລາວ ໄດ້ເນັ້ນໃສ່ການສ້າງກົນໄກຊຸກຍູ້ການເພີ່ມຂີດຄວາມສາມາດ ຂອງສະຖາບັນການສຶກສາ ໃນນະໂຍບາຍຍັງໄດ້ເນັ້ນການປຸງປຸງຫຼັກສູດ ເພື່ອໃຫ້ສອດຄ່ອງກັບລະດັບການຮຽນ - ການສອນ ແລະ ໃຫ້ສອດຄ່ອງກັບຄວາມຕ້ອງການພັດທະນາເສດຖະກິດ - ສັງຄົມ ຂອງພາກພື້ນ - ສາກົນ (UNESCO Institute for Lifelong Learning, 2017).

ການພັດທະນາຄົນໃຫ້ມີຄຸນນະພາບນັ້ນເປັນໜ້າທີ່ຕົ້ນຕໍ ຂອງລະບົບການສຶກສາ ຊຶ່ງແມ່ນຂະບວນການກໍ່ສ້າງໃຫ້ຄົນມີຄວາມຮູ້ຄວາມສາມາດ, ມີທັກສະ, ມີສະຕິປັນຍາ, ສາມາດໃຈແຍກວິເຄາະ, ຮູ້ຈັກແກ້ໄຂບັນຫາ, ສາມາດຮຽນຮູ້ດ້ວຍຕົນເອງ ໃນນັ້ນຍັງສາມາດປັບຕົວທັນກັບການປ່ຽນແປງທີ່ເກີດຂຶ້ນໃນສະພາບແວດລ້ອມ ຂອງພາກພື້ນ - ສາກົນ (ກະຊວງສຶກສາທິການ ແລະ ກິລາ, 2016).

ສະຖາບັນການສຶກສາວິທະຍາສາດການແພດ ມີໜ້າທີ່ສຳຄັນໃນການຜະລິດບຸກຄະລາກອນ ເພື່ອຕອບສະໜອງໃຫ້ແຜນຍຸດທະສາດ (ກະຊວງສາທາລະນະສຸກ, 2011) ຕາມວິໄສທັດການພັດທະນາຊັບພະຍາກອນສາທາລະນະສຸກ 2030 ໃນຂອບເຂດທົ່ວປະເທດໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ເຊັ່ນ: ການປັບປຸງການຮຽນ - ການສອນ ຂອງສະຖາບັນການສຶກສາແຫ່ງຕ່າງໆ ຈັດຕັ້ງລະບົບການເຊື່ອມສານໂຮງຮຽນກັບໂຮງໝໍ ຈັດຕັ້ງລະບົບປະກັນຄຸນນະພາບ, ຍົກລະດັບບຸກຄະລາກອນລະດັບຊ່ຽວຊານໃນຂະແໜງຕ່າງໆ ໃຫ້ສູງຂຶ້ນເລື້ອຍໆ (ກະຊວງສາທາລະນະສຸກ, 2014).

ແພດແມ່ນຊັບພະຍາກອນທີ່ສຳຄັນມີໜ້າທີ່ເບິ່ງແຍງຮັກສາ, ສົ່ງເສີມສຸຂະພາບ, ປ້ອງກັນພະຍາດ ແລະ ຟື້ນຟູສຸຂະພາບຄົນເຈັບ ເປັນວຽກທີ່ມີປະໂຫຍດຕໍ່ມວນມະນຸດ ຈຶ່ງເວົ້າໄດ້ວ່າແພດຄືບຸກຄົນສຳຄັນຕໍ່ມວນມະນຸດ ພາຍໃຕ້ກະແສສັງຄົມໃນປະຈຸບັນທີ່ມີການປ່ຽນແປງຢ່າງວ່ອງໄວເປັນຍຸກທີ່ມີການປັບປ່ຽນ ໂດຍຖືເອົາສຸຂະພາບ ຂອງປະຊາຊົນເປັນຫຼັກ ດັ່ງນັ້ນ; ວິຊາຊີບແພດຕ້ອງມີການປັບປ່ຽນບົດບາດຂອງຕົນໃຫ້ທັນກັບຍຸດທະສາດພ້ອມທັງແກ້ໄຂບັນຫາອາຊີບແພດແບບເກົ່າໆ ທີ່ຢຶດເອົາກົດລະບຽບ - ປະເພນີດັ່ງເດີມ.

ຄະນະແພດສາດເປັນສະຖາບັນຜະລິດແພດອອກຮັບໃຊ້ສັງຄົມ ລວມທັງພັດທະນາຊັບພະຍາ ກອນມະນຸດທາງດ້ານຮ່າງກາຍ, ຈິດໃຈ ແລະ ສັງຄົມ. ແພດທີ່ດີຕ້ອງມີຄວາມສາມາດໃນການປ້ອງກັນພະຍາດ, ສົ່ງເສີມສຸຂະພາບ, ບຳບັດຮັກສາຟື້ນຟູສະມັດຖະພາບ ແລະ ເພີ່ມຄຸນນະພາບຊີວິດໃຫ້ແກ່ມວນມະນຸດໃນລະດັບບຸກຄົນ ແລະ ສັງຄົມ ຊຶ່ງໃນຫຼັກສູດການແພດ ແມ່ນເປັນການສ້າງແພດປິ່ນປົວ ສຳຄັນແມ່ນຜູ້ສຳເລັດການສຶກສາດ້ານວິຊາຊີບແພດຄວນໄດ້ຮັບຄວາມຮູ້ຄວາມສາມາດ, ຄວາມສຳນຶກສຳນານ ແລະ ການອົບຮົມຈິດໃຈ.

## ວິທີວິທະຍາການຄົ້ນຄວ້າ

### ການອອກແບບການຄົ້ນຄວ້າ

ການສຶກສາຄັ້ງນີ້ ແມ່ນການສຶກສາຮູບແບບພັນລະນາ ນະຈຸດເວລາໃດໜຶ່ງ (Cross-sectional descriptive study) ໂດຍໃຊ້ວິທີການຄົ້ນຄວ້າແບບປະລິມານ (Qualitative).

### ສະຖານທີ່ ແລະ ໄລຍະເວລາການຄົ້ນຄວ້າ

ການສຶກສາຄັ້ງນີ້ແມ່ນໄດ້ຈັດຕັ້ງປະຕິບັດຢູ່ທີ່ ຄະນະແພດສາດ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ, ນະຄອນຫຼວງວຽງຈັນ, ສປປ ລາວ. ກຳນົດໄລຍະເວລາ 12 ເດືອນ.

### ປະຊາກອນສຶກສາ

ປະຊາກອນສຶກສາແມ່ນ ຜູ້ບໍລິຫານ, ຄູ-ອາຈານ, ນັກສຶກສາ ແລະ ນາຍຈ້າງ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ.

### ເງື່ອນໄຂການເຂົ້າຮ່ວມການສຶກສາ

- ນັກສຶກສາທີ່ກຳລັງສຶກສາຢູ່ຄະແພດສາດ ຊັ້ນຮຽນປີທີ 5 ຫາ ປີທີ 6.
- ນັກສີສາທີ່ສຳເລັດໃນຫຼັກສູດແພດສາດບັນດິດ.
- ຜູ້ບໍລິຫານ ແລະ ຄູ-ອາຈານ ທີ່ກຳລັງສິດສອນຢູ່.
- ຍິນຍອມ ແລະ ສະໝັກໃຈເຂົ້າຮ່ວມໃນການສຶກສານີ້.

### ເງື່ອນໄຂບໍ່ເຂົ້າຮ່ວມການສຶກສາ

- ນັກສຶກສາທີ່ສຶກສາຢູ່ຊັ້ນຮຽນປີທີ 1 ຫາ ປີ 4.
- ນັກສຶກສາທີ່ກຳລັງຝຶກງານຢູ່ຕາມໂຮງໝໍ ຫຼື ສູນການແພດແຕ່ລະແຫ່ງ.
- ຜູ້ທີ່ບໍ່ສະໝັກໃຈ ຫຼື ບໍ່ຍິນຍອມເຂົ້າຮ່ວມໃນການສຶກສາຄັ້ງນີ້.

### ຂະໜາດຕົວຢ່າງ ແລະ ການສຸ່ມຕົວຢ່າງ

ການສຶກສາຄັ້ງນີ້ ໄດ້ຄິດໄລ່ຂະໜາດຕົວຢ່າງ ຫຼື ຈຳນວນປະຊາກອນຕົວຢ່າງ ເຊິ່ງໄດ້ກຸ່ມຕົວຢ່າງຈຳນວນ

330 ຄົນ ໂດຍນໍາໃຊ້ການສຸ່ມຕົວຢ່າງແບບງ່າຍດາຍ (Sample random sampling) ໂດຍໃຊ້ວິທີເກັບຕົວຢ່າງແບບເຈາະຈົງ (Purposive sampling).

### ວິທີການເກັບຂໍ້ມູນ

ການເກັບຂໍ້ມູນແມ່ນໃຊ້ແບບຟອມສອບຖາມ ໂດຍການສໍາພາດເປັນສ່ວນບຸກຄົນ (ໜ້າຊື່ງໜ້າ) ແລະ ເກັບຂໍ້ມູນໂດຍນັກຄົ້ນຄວ້າເອງ ແລະ ຜູ້ຊ່ວຍ 01 ຄົນ, ໂດຍໃຊ້ເວລາປະມານ 10 - 20 ນາທີ/ຄົນ. ມີການກວດສອບຂໍ້ມູນຢ່າງສະໝໍ່າສະເໝີໃນຊ່ວງເວລາເກັບກໍາຂໍ້ມູນໃນແຕ່ລະວັນ ຫາກມີຂໍ້ມູນຂາດ ຫຼື ເສຍໄປໃຫ້ບັນທຶກຂໍ້ມຸນໄວ້ ແລະ ກວດສອບໃນມື້ຕໍ່ມາ.

### ຂະບວນການວິເຄາະຂໍ້ມູນ

ພາຍຫຼັງເກັບຂໍ້ມູນທັງໝົດແລ້ວໄດ້ກວດເບິ່ງແບບຟອມ ເພື່ອຄວາມຖືກຕ້ອງແລ້ວນໍາໄປວິເຄາະຂໍ້ມູນດ້ວຍ Program SPSS, ນໍາໃຊ້ສະຖິຕິແບບພັນລະນາເພື່ອວິເຄາະຂໍ້ມູນເປັນຈໍານວນຄວາມຖີ່ (Frequency), ສ່ວນຮ້ອຍ (%), ຄ່າສະເລ່ຍ (Mean), ຄ່າເຄິ່ງກາງ (Median), ຄ່າບ່ຽງເບັນມາດຕະຖານ (S.D), ຄ່າຕໍ່າສຸດ (Min) ແລະ ຄ່າສູງສຸດ (Max).

### ຈັນຍາທໍາໃນການຄົ້ນຄວ້າ

ການສຶກສາໃນຄັ້ງນີ້ ແມ່ນໄດ້ຮັບການອານຸມັດການຄົ້ນຄວ້າ ຈາກຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດລາວ. ການຄົ້ນຄວ້ານີ້ຈະບໍ່ສົ່ງຜົນກະທົບທາງດ້ານຮ່າງກາຍ ແລະ ຈິດໃຈຂອງຜູ້ທີ່ເຂົ້າຮ່ວມໃນການສຶກສາ ແລະ ບໍ່ແຕະຕ້ອງເຖິງຈັນຍາທໍາແພດ, ການສຶກສານີ້ຈະມີຜົນປະໂຫຍດທາງອ້ອມແກ່ກຸ່ມຕົວຢ່າງທີ່ເຂົ້າຮ່ວມໃນການສຶກສາ ແລະ ເປັນຂໍ້ມູນພື້ນຖານທີ່ສໍາຄັນ ໃນການສຶກສາຄັ້ງຕໍ່ໄປ ໃນຄະນະອື່ນໆຂອງ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ.

## ຜົນການຄົ້ນຄ້ວາ

### ຄຸນລັກສະນະດ້ານປະຊາກອນສາດ

ຕາຕະລາງ 1 ສະແດງໃຫ້ເຫັນວ່າ ອາຈານສອນສ່ວນຫຼາຍເປັນເພດຍິງ ຈໍານວນ 26 ຄົນ (52.0%). ອາຍຸຂອງອາຈານສອນສ່ວນຫຼາຍຢູ່ລະຫວ່າງ 31 - 40 ປີ ຈໍານວນ 17 ຄົນ (34.0%) ແລະ ໜ້ອຍທີ່ສຸດແມ່ນມີອາຍຸສູງກວ່າ 50 ປີ ຈໍານວນ 7 ຄົນ (14.0%). ວຸດທິການສຶກສາຂອງອາຈານສອນ ສ່ວນຫຼາຍຈົບປະລິນຍາໂທ ຈໍານວນ 21 ຄົນ (42.0%), ຮອງລົງມາແມ່ນຈົບປະລິນຍາຕີ ຈໍານວນ 17 ຄົນ (34.0%), ໜ້ອຍທີ່ສຸດແມ່ນຈົບປະລິນຍາເອກ ຈໍານວນ 12 ຄົນ (24.0%) ແລະ ອາຈານທີ່ຈົບຊັ້ນສູງແມ່ນບໍ່ມີ. ຕໍາແໜ່ງຂອງອາຈານສອນ ສ່ວນຫຼາຍແມ່ນຢູ່ໃນລະດັບຕໍາແໜ່ງວິຊາການ ຈໍານວນ 34 ຄົນ (68.0%). ສ່ວນປະສົບການເຮັດວຽກຂອງອາຈານສອນ ສ່ວນຫຼາຍມີປະສົບການສູງກວ່າ 15 ປີ ຈໍານວນ 19 ຄົນ (38.0%) ແລະ ຕໍ່າກວ່າ 5 ປີ ຈໍານວນ 10 ຄົນ (20.0%). ການສິດສອນໃນສາຂາວິຊາຕ່າງໆຂອງອາຈານ ສ່ວນຫຼາຍແມ່ນໝວດວິຊາວິທະຍາສາດພື້ນຖານ ຈໍານວນ 21 ຄົນ (42.0%) ແລະ ກຸ່ມວິຊາພື້ນຖານການແພດ ຈໍານວນ 21 ຄົນ (42.0%) ແລະ ພາກວິຊາສະເພາະແມ່ນບໍ່ມີ (ຕາຕະລາງທີ 1).

**ຕາຕະລາງທີ 1: ຂໍ້ມູນທົ່ວໄປຂອງອາຈານສອນ, ມວສ**

| ຕົວຜັນແປ | ຈໍານວນ (n= 50) | ສ່ວນຮ້ອຍ (%) |
|---|---|---|
| **ອາຍຸ ( ປີ )** | | |
| 26 – 30 | 10 | 20.0 |
| 31 - 40 | 17 | 34.0 |
| 41 – 50 | 16 | 32.0 |
| ສູງກວ່າ 50 | 7 | 14.0 |
| **ເພດ** | | |
| ຊາຍ | 24 | 48.0 |
| ຍິງ | 26 | 52.0 |
| **ລະດັບການສຶກສາ** | | |
| ປະລິນຍາຕີ | 17 | 34.0 |
| ປະລິນຍາໂທ | 21 | 42.0 |
| ປະລິນຍາເອກ | 12 | 24.0 |
| **ຕໍາແໜ່ງ** | | |
| ວິຊາການ | 34 | 68.0 |
| ຮອງຜູ້ຊ່ວຍອໍານວຍການ | 9 | 18.0 |
| ຮອງອໍານວຍການ | 5 | 10.0 |
| ຮອງຄະນະບໍດີ | 2 | 4.0 |
| **ປະສົບການເຮັດວຽກ** | | |
| ຕໍ່າກວ່າ 5 ປີ | 10 | 20.0 |
| 5 – 10 ປີ | 10 | 20.0 |
| 11 – 15 ປີ | 11 | 22.0 |
| ສູງກວ່າ 15 ປີ | 19 | 38.0 |
| **ສິດສອນໃນສາຂາວິຊາຕ່າງໆ** | | |
| ຜູ້ບໍລິຫານ | 10 | 20.0 |
| ວິຊາວິທະຍາສາດພື້ນຖານ | 21 | 42.0 |
| ພາກວິຊາບັງຄັບ | 0 | 0.0 |
| ພາກວິຊາທໍາມະຊາດ | 1 | 2.0 |
| ໝວດວິຊາສະເພາະ | 12 | 24.0 |
| ວິຊາພື້ນຖານການແພດ | 21 | 42.0 |
| ວິຊາບັງຄັບດ້ານຄຣີນິກ | 8 | 16.0 |

ຕາຕະລາງ 2 ສະແດງໃຫ້ເຫັນວ່າ ນັກສຶກສາສ່ວນຫຼາຍເປັນເພດຍິງ ຈຳນວນ 115 ຄົນ (57.5%). ອາຍຸຂອງນັກສຶກສາ ສ່ວນຫຼາຍຕ່ຳກວ່າ 26 ປີ ຈຳນວນ 170 ຄົນ (85.0%). ວຸດທິການສຶກສາຂອງນັກສຶກສາ ແມ່ນປະລິນຍາຕີທັງໝົດ ຈຳນວນ 200 ຄົນ (100%). ປີຮຽນຂອງນັກສຶກສ່ວນໃຫ່ຍແມ່ນປີທີ 5 ຈຳນວນ 112 ຄົນ (56.0%) ແລະ ປີຮຽນຂອງນັກສຶກສາປີທີ 6 ຈຳນວນ 88 ຄົນ (44.0%). ສ່ວນປະສົບການເຮັດວຽກ ຂອງນັກສຶກສາ ສ່ວນຫຼາຍບໍ່ມີປະສົບການ ຈຳນວນ 183 ຄົນ (91.5%). ນັກສຶກສາໄດ້ຜ່ານ 4 ພະແນກໃຫ່ຍ: ພະແນກພາຍໃນ, ພະແນກພາຍນອກ, ພະແນກເດັກນ້ອຍ ແລະ ພະແນກປະສູດ-ພະຍາດຍິງ ຈຳນວນທັງໝົດ 200 ຄົນ (100%) (ຕາຕະລາງທີ 2).

**ຕາຕະລາງ 2: ຂໍ້ມູນທົ່ວໄປຂອງນັກສຶກສາ, ມວສ**

| ຕົວພັນແປ | ຈຳນວນ (n= 200) | ສ່ວນຮ້ອຍ (%) |
|---|---|---|
| **ອາຍຸ ( ປີ )** | | |
| ຕ່ຳກວ່າ 26 | 170 | 85.0 |
| 26 - 30 | 17 | 34.0 |
| 31 – 40 | 16 | 32.0 |
| **ເພດ** | | |
| ຊາຍ | 85 | 42.5 |
| ຍິງ | 115 | 57.5 |
| **ລະດັບການສຶກສາ** | | |
| ປະລິນຍາຕີ | 200 | 100.0 |
| **ປີຮຽນ** | | |
| ປີ 5 | 112 | 56.0 |
| ປີ 6 | 88 | 44.0 |
| **ປະສົບການເຮັດວຽກ** | | |
| ບໍ່ມີ | 183 | 91.5 |
| ຕ່ຳກວ່າ 5 ປີ | 13 | 6.5 |
| 5 – 10 ປີ | 4 | 2.0 |
| **ສຶກສາຜ່ານພະແນກຕ່າງໆ** | | |
| ພະແນກພາຍໃນ | 200 | 100 |
| ພະແນກພາຍນອກ | 200 | 100 |
| ພະແນກເດັກນ້ອຍ | 200 | 100 |
| ພະແນກປະສູດ-ພະຍາດຍິງ | 200 | 100 |
| ພະແນກອື່ນໆ | 65 | 32.5 |

ຕາຕະລາງ 3 ສະແດງໃຫ້ເຫັນວ່າ ອາດີດນັກສຶກສາສ່ວນຫຼາຍເປັນເພດຊາຍ ຈຳນວນ 27 ຄົນ (54.0%). ອາຍຸຂອງນັກສຶກສາສ່ວນຫຼາຍລະຫວ່າງ 26 - 30 ປີ ຈຳນວນ 25 ຄົນ (50.0%). ວຸດທິການສຶກສາຂອງອາດີດນັກສຶກສາ ສ່ວນຫຼາຍຈົບປະລິນຍາຕີທັງໝົດ ຈຳນວນ 45 ຄົນ (90.0%) ສ່ວນຮ້ອຍ. ຕຳແໜ່ງຂອງອາດີດນັກສຶກສາ ສ່ວນຫຼາຍບໍ່ມີຕຳແໜ່ງ ຈຳນວນ 46 ຄົນ (92.0%). ສ່ວນປະສົບການເຮັດວຽກຂອງອາດີດນັກສຶກສາ ສ່ວນຫຼາຍຕ່ຳກວ່າ 5 ປີ ຈຳນວນ 36 ຄົນ (72.0%). ສ່ວນຫຼາຍອາດີດນັກສຶກສາ ໄດ້ຜ່ານພະແນກພາຍໃນ ຈຳນວນ 26 ຄົນ (52.0%) ແລະ ໜ້ອຍທີ່ສຸດ ແມ່ນພະແນກເດັກນ້ອຍ ແລະ ພະແນກປະສູດ-ພະຍາດຍິງ ຈຳນວນ 4 ຄົນ (8.0%) (ຕາຕະລາງທີ 3).

**ຕາຕະລາງ 3: ຂໍ້ມູນທົ່ວໄປຂອງອາດີດນັກສຶກສາ, ມວສ**

| ຕົວພັນແປ | ຈຳນວນ (n= 50) | ສ່ວນຮ້ອຍ (%) |
|---|---|---|
| **ອາຍຸ ( ປີ )** | | |
| ຕ່ຳກວ່າ 26 | 19 | 38.0 |
| 26 – 30 | 25 | 50.0 |
| 31 - 40 | 6 | 12.0 |
| **ເພດ** | | |
| ຊາຍ | 27 | 54.0 |
| ຍິງ | 23 | 46.0 |
| **ລະດັບການສຶກສາ** | | |
| ປະລິນຍາຕີ | 45 | 90.0 |
| ປະລິນຍາໂທ | 5 | 10.0 |
| **ຕຳແໜ່ງ** | | |
| ບໍ່ມີຕຳແໜ່ງ | 46 | 92.0 |
| ຮອງຜູ້ຊ່ວຍອຳນວຍການ | 4 | 8.0 |
| **ປະສົບການເຮັດວຽກ** | | |
| ຕ່ຳກວ່າ 5 ປີ | 36 | 72.0 |
| 5 – 10 ປີ | 11 | 22.0 |
| 11 – 15 ປີ | 3 | 6.0 |
| **ປະຈຸບັນເຮັດວຽກຢູ່ພະແນກຕ່າງໆ** | | |
| ພະແນກພາຍໃນ | 26 | 52.0 |
| ພະແນກພາຍນອກ | 9 | 18.0 |
| ພະແນກເດັກນ້ອຍ | 4 | 8.0 |
| ພະແນກປະສູດ-ພະຍາດຍິງ | 4 | 8.0 |
| ພະແນກອື່ນໆ | 9 | 18.0 |

ຕາຕະລາງ 4 ສະແດງໃຫ້ເຫັນວ່າ ນາຍຈ້າງສ່ວນຫຼາຍເປັນເພດຊາຍ ຈຳນວນ 19 ຄົນ (63.3%). ອາຍຸຂອງນາຍຈ້າງສ່ວນຫຼາຍມີລະຫວ່າງ 41 - 50 ປີ ຈຳນວນ 15 ຄົນ (50.0%). ວຸດທິການສຶກສາຂອງນາຍຈ້າງສ່ວນຫຼາຍຈົບປະລິນຍາໂທ ຈຳນວນ 19 ຄົນ (63.3%). ຕຳແໜ່ງຂອງນາຍຈ້າງ ສ່ວນຫຼາຍແມ່ນຢູ່ໃນລະດັບຕຳແໜ່ງຮອງອຳນວຍການ ຈຳນວນ 14 ຄົນ (46.7%) ແລະ ໜ້ອຍທີ່ສຸດແມ່ນອຳນວຍການ ຈຳນວນ 3 ຄົນ (10.0%) (ຕາຕະລາງທີ 4).

**ຕາຕະລາງ 4: ຂໍ້ມູນທົ່ວໄປຂອງນາຍຈ້າງໃນໂຮງໝໍຕ່າງໆ**

| ຕົວຜັນແປ | ຈຳນວນ (n= 50) | ສ່ວນຮ້ອຍ (%) |
|---|---|---|
| **ອາຍຸ ( ປີ )** | | |
| 26 – 30 | 2 | 6.7 |
| 31 - 40 | 4 | 13.3 |
| 41 – 50 | 15 | 50.0 |
| ສູງກວ່າ 50 | 9 | 30.0 |
| **ເພດ** | | |
| ຊາຍ | 19 | 63.3 |
| ຍິງ | 11 | 36.7 |
| **ລະດັບການສຶກສາ** | | |
| ປະລິນຍາຕີ | 11 | 36.7 |
| ປະລິນຍາໂທ | 19 | 63.3 |
| **ຕຳແໜ່ງ** | | |
| ຮອງຜູ້ຊ່ວຍອຳນວຍການ | 13 | 43.3 |
| ຮອງອຳນວຍການ | 14 | 46.7 |
| ອຳນວຍການ | 3 | 10.0 |

## ຜົນການວິເຄາະຄວາມຄິດເຫັນໃນດ້ານຕ່າງໆ

ຕາຕະລາງທີ 5 ການປະເມີນຄວາມສອດຄ່ອງຂອງຫຼັກສູດແພດສາດຕາມຄວາມຄິດເຫັນຂອງອາຈານສອນ, ນັກສຶກສາ ແລະ ອາດີດນັກສຶກສາໂດຍພາບລວມ ແລະ ລາຍດ້ານເຫັນວ່າ:

1). ຈາກຄວາມຄິດເຫັນຂອງອາຈານ ໂດຍພາບລວມມີຄວາມສອດຄ່ອງໃນລະດັບຫຼາຍ ເຊິ່ງມີຄ່າ (μ = 3.63, σ= .57), ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າແຕ່ລະຂໍ້ມີສະເລ່ຍໃນລະດັບຫຼາຍ. ສູງສຸດແມ່ນດ້ານບໍລິບົດ ເຊິ່ງມີຄ່າ (μ = 3.87, σ = .63), ແລະ ຮອງລົງມາແມ່ນດ້ານຂະບວນການ ເຊິ່ງມີຄ່າ (μ = 3,64, σ = .47). ດ້ານທີ່ມີຄ່າສະເລ່ຍຕ່ຳສຸດແມ່ນດ້ານປັດໄຈນຳເຂົ້າ ເຊິ່ງມີຄ່າ (μ = 3.38, σ = .62),

2). ຄວາມຄິດເຫັນຂອງນັກສຶກສາ ໂດຍພາບລວມມີຄວາມສອດຄ່ອງໃນລະດັບຫຼາຍເຊິ່ງມີຄ່າ (μ = 3.52, σ = .57), ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າແຕ່ລະຂໍ້ມີສະເລ່ຍໃນລະດັບຫຼາຍ. ສູງສຸດແມ່ນດ້ານບໍລິບົດ ເຊິ່ງມີຄ່າ (μ = 3,85, σ = .59) ແລະ ຮອງລົງມາແມ່ນດ້ານຂະບວນການເຊິ່ງມີຄ່າ (μ = 3.50, σ = .56), ດ້ານທີ່ມີຄ່າສະເລ່ຍຕ່ຳສຸດແມ່ນດ້ານປັດໄຈນຳເຂົ້າ ເຊິ່ງມີຄ່າ (μ = 3.23, σ = .58),

3). ຈາກຄວາມຄິດເຫັນຂອງອາດີດນັກສຶກສາ ໂດຍພາບລວມມີຄວາມສອດຄ່ອງໃນລະດັບຫຼາຍ ເຊິ່ງມີຄ່າ (μ = 3.62, σ = .65), ເມື່ອພິຈາລະນາເປັນແຕ່ລະຂໍ້ເຫັນວ່າແຕ່ລະຂໍ້ມີສະເລ່ຍໃນລະດັບຫຼາຍ. ສູງສຸດແມ່ນດ້ານບໍລິບົດ ເຊິ່ງມີຄ່າ (μ = 3,88, σ = .52) ແລະ ຮອງລົງມາແມ່ນດ້ານຂະບວນການເຊິ່ງມີຄ່າ (μ = 3.58, σ = .75), ດ້ານທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ດ້ານປັດໄຈນຳເຂົ້າ ເຊິ່ງມີຄ່າ (μ = 3.42, σ = .70) (ຕາຕະລາງທີ 5).

**ຕາຕາລາງທີ 5: ສະແດງຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ໂດຍລວມ ແລະ ແຕ່ລະດ້ານ**

| ຫຼັກສູດ | ອາຈານສອນ | | | ນັກສຶກສາ | | | ອາດີດນັກສຶກສາ | | |
|---|---|---|---|---|---|---|---|---|---|
| | μ | σ | ລະດັບຄວາມສອດຄ່ອງ | μ | σ | ລະດັບຄວາມສອດຄ່ອງ | μ | σ | ລະດັບຄວາມສອດຄ່ອງ |
| 1. ດ້ານບໍລິບົດ | 3.87 | .63 | ຫຼາຍ | 3.85 | .59 | ຫຼາຍ | 3.88 | .52 | ຫຼາຍ |
| 2. ດ້ານປັດໄຈນຳເຂົ້າ | 3.38 | .62 | ປານກາງ | 3.23 | .58 | ປານກາງ | 3.42 | .70 | ປານກາງ |
| 3. ດ້ານຂະບວນການ | 3.64 | .47 | ຫຼາຍ | 3.50 | .56 | ປານກາງ | 3.58 | .75 | ຫຼາຍ |
| **ລວມ** | **3.63** | **.57** | **ຫຼາຍ** | **3.52** | **.57** | **ຫຼາຍ** | **3.62** | **.65** | **ຫຼາຍ** |

ຕາຕະລາງ 6 ການປະເມີນຄວາມສອດຄ່ອງ ດ້ານປັດຊະຍາຫຼັກສູດແພດສາດ ຕາມຄວາມຄິດເຫັນຂອງອາຈານສອນ, ນັກສຶກສາ ແລະ ອາດີດນັກສຶກສາເຫັນວ່າ:

1). ຈາກຄວາມຄິດເຫັນຂອງອາຈານ ປັດຊະຍາຂອງຫຼັກສູດໂດຍພາບລວມມີຄວາມສອດຄ່ອງໃນລະດັບຫຼາຍເຊິ່ງມີຄ່າ (μ = 4.07, σ = .73), ເມື່ອພິຈາລະນາເປັນແຕ່ລະຂໍ້ເຫັນວ່າແຕ່ລະຂໍ້ມີຄວາມສອດຄ່ອງໃນລະດັບຫຼາຍ. ຂໍ້ທີ່ມີຄ່າສະເລ່ຍສູງສຸດ ແມ່ນຄວາມສອດຄ່ອງ ກັບແນວທາງນະໂຍບາຍຂອງພັກ - ລັດ ເຊິ່ງມີຄ່າ (μ = 4.16, σ = .73), ແລະ ຮອງລົງມາແມ່ນການກຳນົດປັດຊະຍາ ຂອງຫຼັກສູດແພດສາດມີຄວາມສອດຄ່ອງກັບສະພາບຄວາມເປັນຈິງຂອງສັງຄົມເຊິ່ງມີຄ່າ (μ = 3,98, σ = .79).

2). ຈາກຄວາມຄິດເຫັນຂອງນັກສຶກສາ ປັດຊະຍາຂອງຫຼັກສູດໂດຍພາບລວມມີຄວາມສອດຄ່ອງໃນລະດັບຫຼາຍ ເຊິ່ງມີຄ່າ ($\mu = 4.19, \sigma = .85$), ເມື່ອພິຈາລະນາເປັນແຕ່ລະຂໍ້ເຫັນວ່າແຕ່ລະຂໍ້ມີຄວາມສອດຄ່ອງໃນລະດັບຫຼາຍ. ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນການກຳນົດປັດສະຍາ ຂອງຫຼັກສູດແພດສາດມີຄວາມສອດຄ່ອງກັບສະພາບຄວາມເປັນຈິງຂອງສັງຄົມ ເຊິ່ງມີຄ່າ ($\mu = 4{,}20, \sigma = .86$), ແລະ ຮອງລົງມາແມ່ນຄວາມສອດຄ່ອງກັບແນວທາງນະໂຍບາຍຂອງພັກ - ລັດ ເຊິ່ງມີຄ່າ ($\mu = 4.18, \sigma = .84$).

3). ຈາກຄວາມຄິດເຫັນຂອງອາດີດນັກສຶກສາ ປັດຊະຍາຂອງຫຼັກສູດໂດຍພາບລວມມີຄວາມສອດຄ່ອງໃນລະດັບຫຼາຍເຊິ່ງມີຄ່າ ($\mu = 3{,}81, \sigma = .88$), ເມື່ອຈຳແນກເປັນແຕ່ລະຂໍ້ພົບວ່າແຕ່ລະຂໍ້ມີຄວາມສອດຄ່ອງໃນລະດັບຫຼາຍ, ຂໍ້ທີ່ມີຄ່າສະເລ່ຍສູງກວ່າໝູ່ແມ່ນສອດຄ່ອງກັບແນວທາງນະໂຍບາຍຂອງພັກ - ລັດ ເຊິ່ງມີຄ່າ ($\mu = 3{,}82, \sigma = .85$) ຮອງລົງມາແມ່ນ ການກຳນົດປັດຊະຍາ ຂອງຫຼັກສູດແພດສາດມີຄວາມສອດຄ່ອງກັບສະພາບຄວາມເປັນຈິງຂອງສັງຄົມ ເຊິ່ງມີຄ່າ ($\mu = 3{,}80, \sigma = .90$).

**ຕາຕາລາງທີ 6: ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ທີ່ມີຕໍ່ປັດສະຍາຫຼັກສູດໂດຍລວມ ແລະ ເປັນແຕ່ລະຂໍ້**

| ລ/ດ | ດ້ານບໍລິບົດ | ອາຈານສອນ (N=50) | | | ນັກສຶກສາ (N=200) | | | ອາດີດນັກສຶກສາ (N=50) | | |
|---|---|---|---|---|---|---|---|---|---|---|
| | | $\mu$ | $\sigma$ | ແປຜົນ | $\mu$ | $\sigma$ | ແປຜົນ | $\mu$ | $\sigma$ | ແປຜົນ |
| **ປັດຊະຍາຂອງຫຼັກສູດ** | | | | | | | | | | |
| 1. | ການກຳນົດປັດສະຍາ ຂອງຫຼັກສູດແພດສາດມີຄວາມສອດຄ່ອງກັບສະພາບຄວາມເປັນຈິງຂອງສັງຄົມ | 3.98 | .79 | ຫຼາຍ | 4.20 | .86 | ຫຼາຍ | 3.80 | .90 | ຫຼາຍ |
| 2. | ສອດຄ່ອງກັບແນວທາງນະໂຍບາຍຂອງພັກ - ລັດ | 4.16 | .73 | ຫຼາຍ | 4.18 | .84 | ຫຼາຍ | 3.82 | .85 | ຫຼາຍ |
| **ລວມ** | | **4.07** | **.73** | **ຫຼາຍ** | **4.19** | **.85** | **ຫຼາຍ** | **3.81** | **.88** | **ຫຼາຍ** |

## ການສົນທະນາ

ຜົນການປະເມີນຫຼັກສູດການແພດ ຄະນະແພດສາດ ມະຫາວິທະຍາໄລ ວິທະຍາສາດ ສຸກຂະພາບ ໂດຍອີງຕາມຄວາມຄິດເຫັນຂອງອາຈານສອນ, ນັກສຶກສາ, ອາດີດນັກສຶກສາ ແລະ ນາຍຈ້າງ ພົບວ່າດ້ານບໍລິບົດ ມີຄວາມສອດຄ່ອງຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ມະຫາວິທະຍາໄລວິທະຍາສາດ ສຸຂະພາບ ເປັນມະຫາວິທະຍາໄລໜຶ່ງທີ່ມີວິໄສທັດ, ມີຈຸດປະສົງ ແລະ ມີເປົ້າຫມາຍໃນການພັດທະນາຊັບພະຍາກອນມະນຸດ ໂດຍເລັ່ງໃສ່ພະນັກງານແພດໝໍ, ນັກສຶກສາຈົບໃໝ່ ທີ່ປະຕິບັດວຽກງານຢູ່ພາຍໃນໂຮງໝໍ ໃຫ້ມີຄວາມຮູ້ຄວາມສາມາດໃນການປະກອບຫນ້າທີ່ວຽກງານທີ່ເປັນໄປຕາມແຜນການພັດທະນາບຸກຄະລາກອນ. ນອກຈາກນີ້, ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ໄດ້ມີຫຼັກສູດທີ່ໃຊ້ໃນການຮຽນ-ການສອນ ເຊິ່ງສອດຄ່ອງກັບການພັດທະນາເສດຖະກິດສັງຄົມ ແລະ ຕະຫຼາດແຮງງານໃນປັດຈຸບັນ ເຊິ່ງເຫັນໄດ້ຈາກການປະເມີນໂຄງສ້າງຫຼັກສູດແຕ່ລະໝວດວິຊາ ແລະ ລາຍວິຊາໃນໂຄງສ້າງຫຼັກສູດມີຄວາມສອດຄ່ອງໃນລະດັບຫຼາຍ ແລະ ສາມາດພັດທະນານັກສຶກສາໄປຕາມວິໄສທັດ, ຈຸດປະສົງທີ່ວາງໄດ້ ແລະ ສົ່ງເສີມໃຫ້ນັກສຶກສາມີການພັດທະນາຢ່າງຮອບດ້ານໂດຍສະເພາະຄວາມຮູ້ດ້ານວິຊາການ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ (ບຸນລ້ຽງ ທຸມທອງ, 2015).

ດ້ານປັດໄຈນຳເຂົ້າເປັນດ້ານທີ່ຜົນການປະເມີນມີຄວາມສອດຄ່ອງຢູ່ໃນລະດັບປານກາງ. ເນື່ອງຈາກວ່າຈາກການປະເມີນໃນດ້ານປັດໄຈນຳເຂົ້ານີ້ ພົບວ່າຍັງມີຫຼາຍດ້ານທີ່ຕ້ອງໄດ້ເອົາໃຈໃສ່ປັບປຸງເປັນຕົ້ນ ອຸປະກອນທີ່ຮັບໃຊ້ໃນການຮຽນ-ການສອນ, ຕຳລາຮຽນ, ວາລະສານ, ເອກະສານສະເພາະສາຂາວິຊາໃນຫ້ອງສະໝຸດບໍ່ພຽງພໍ ແລະ ບໍ່ທັນສະໄໝໃນການສືບຄົ້ນຫາຂໍ້ມູນ, ແຫຼ່ງຂໍ້ມູນດ້ານວິຊາການ ແລະ ວິຊາຊີບການແພດຍັງບໍ່ທັນອຳນວຍຄວາມສະດວກ, ສະຖານທີຝຶກງານບໍ່ພຽງພໍໃນການປະຕິບັດດ້ານຄຣີນິກ, ຫ້ອງຮຽນບໍ່ພຽງພໍທີ່ອຳນວຍຕໍ່ການຮຽນ - ການສອນ ເຊິ່ງສອດຄ່ອງກັບ (ໃຈທິບ ເຊື້ອລັດຕະນະພົງ, 2016).

ດ້ານຂະບວນການພົບວ່າ ໄດ້ມີຄວາມສອດຄ່ອງໃນລະດັບຫຼາຍ ເປັນຕົ້ນດ້ານການບໍລິຫານຫຼັກສູດ, ດ້ານການຈັດການຮຽນ-ການສອນ, ດ້ານການວັດ ແລະ ປະເມີນຜົນ ສິ່ງດັ່ງກ່າວນີ້ເນື່ອງຈາກວ່າການບໍລິຫານຫຼັກສູດໄດ້ມີການນຳໃຊ້ຫຼັກສູດຖືກຕ້ອງ ແລະ ເໝາະສົມ, ແຜນການສຶກສາໃນຫຼັກສູດມີຄວາມຈະແຈ້ງ ແລະ ມີການປະຕິບັດໄປຕາມແຜນກຳນົດໄວ້, ມີການກຳນົດຈຸດປະສົງ ຂອງຫຼັກສູດສອດຄ່ອງກັບເນື້ອໃນຫຼັກສູດ ແລະ ການນຳໃຊ້ຫຼັກສູດສອດຄ່ອງກັບການພັດທະນາຜູ້ຮຽນ ແລະ ສາມາດເຂົ້າໃຈງ່າຍ. ເປີດໂອກາດໃຫ້ນັກຮຽນໄດ້ເລືອກຮຽນໃນວິຊາທີ່ຕ້ອງການ, ແນະນຳໃຫ້ນັກສຶກສາສາມາດຄິດວິເຄາະ, ຕັດສິນ ແລະ ແກ້ໄຂ

ບັນຫາຢ່າງເປັນລະບົບ, ສົ່ງໃຫ້ນັກສຶກສາໄດ້ມີການຄົ້ນຄວ້າ ແລະ ເຮັດວຽກຮ່ວມກັນ ແລະ ພ້ອມດຽວກັນການວັດປະເມີນ ຜົນການຮຽນໄດ້ຄວບຄຸມເອົາເນື້ອໃນວິຊາຮຽນ ແລະ ຈຸດປະສົງຂອງການສອນ ເຊິ່ງສອດຄ່ອງກັບການຄົ້ນຄວ້າ ຂອງ (ອຸໄທ ບຸນປະເສີດ, 2015).

ດ້ານຜົນຜະລິດ ພົບວ່າ ນັກສຶກສາທີ່ຜະລິດອອກໄປນັ້ນມີຄຸນນະທຳຈາລິຍະທຳໃນດ້ານວິຊາຊີບ ເນື່ອງຈາກວ່າ ເຂົາເຈົ້າສະແດງທັດສະນະຄະຕິທີ່ດີ ໃນການໃຫ້ບໍລິການສຸຂະພາບໃນທຸກລະດັບ, ປະຕິບັດລະບຽບການແພດ ແລະ ຮັກສາຈະລິຍະທຳແຫ່ງວິຊາຊີບ, ມີຄວາມຮັບຜິດໃນການເວົ້າຄວາມຈິງກັບຄົນເຈັບ, ຮັກສາຄວາມລັບ ແລະ ເຄົາລົບສິດທິຂອງຄົນເຈັບ, ມີຄວາມຮູ້ຄວາມເຂົ້າໃຈວິທະຍາສາດພື້ນຖານດ້ານການແພດ, ມີຄວາມຮູ້ຄວາມເຂົ້າໃຈດ້ານລະບາດວິທະຍາ ໃຊ້ວິຈາລະນະຍານໃນການຕັດສິນໃຈໃນການປິ່ນປົວຄົນເຈັບໄດ້ຢ່າງຖືກຕ້ອງເໝາະສົມ ແລະ ທັນກັບເວລາ ພ້ອມທັງສາມາດໃຊ້ເຄື່ອງມືຕ່າງໆ ເຂົ້າໃນການກວດກາຮ່າງກາຍ ເພື່ອພິຈາລະນາໃນການປິ່ນປົວ, ມີທັດສະນະຄະຕິໃນການພັດທະນາຄຸນນະພາບວຽກງານຢ່າງມີປະສິດທິພາບ ແລະ ຕໍ່ເນື່ອງ ເຊິ່ງເປັນໄປຕາມວິໄສທັດ ແລະ ຈຸດປະສົງຂອງຫຼັກສູດທີ່ທາງມະຫາວິທະຍາໄລວິທະຍາສາດສຸຂະພາບວາງໄວ້ທຸກປະການ.

## ຂໍ້ຈຳກັດໃນການຄົ້ນຄວ້າ

1) ການສຶກສາເນື້ອໃນເອກະສານ ແນວຄິດທິດສະດີບົດຄົ້ນຄວ້າທີ່ກ່ຽວຂ້ອງຍັງບໍ່ທັນກວ້າງຂວາງ ແລະ ບາງບົດກໍຍັງບໍ່ທັນສອດຄ່ອງກັບບົດຄົ້ນຄວ້າບົດນີ້ເທົ່າທີ່ຄວນ, ອີງໃສ່ຂອງຕ່າງປະເທດບາງຄັ້ງເນື້ອໃນກໍບໍ່ສອດຄ່ອງກັບບໍລິບົດຂອງພວກເຮົາ.
2) ການເກັບຮວບຮວມຂໍ້ມູນກັບນາຍຈ້າງ ແມ່ນມີຄວາມຫຍຸ້ງຍາກຫຼາຍ ຍ້ອນວ່າພາກສ່ວນດັ່ງກ່າວນັ້ນແມ່ນເຮັດວຽກບໍລິການມີເວລາຈຳກັດໃນການຕອບຄຳຖາມ ຕ້ອງໄດ້ທຽວໄປຫຼາຍເທື່ອຈຶ່ງໄດ້ຄືນແລະຍັງມີບາງຄົນຍັງໃຫ້ຂໍ້ມູນບໍ່ຄົບ ແລະ ການໃຫ້ຂໍ້ມູນຟ້າວຟັ່ງ.

## ຂໍ້ສະເໜີແນະສຳລັບການຄົ້ນຄວ້າໃນອະນາຄົດ

1) ຄວນມີການປະເມີນຫຼັກສູດປະລິນຍາຕີ ສາຂາອື່ນໆ ຫຼື ຫຼັກສູດສາຂາວິຊາອື່ນໆ ຂອງມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ຕື່ມອີກໂດຍການນຳໃຊ້ແນວຄິດແບບ CIPP Model ຫຼື ຮູບແບບອື່ນໆ.
2) ຄວນມີການຄົ້ນຄ້ວາເພື່ອຕິດຕາມຜົນການໃຊ້ຫຼັກສູດ ສາຂາວິຊາການແພດ ຂອງມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ໃນແຕ່ລະລຸ້ນໄປຢ່າງຕໍ່ເນື່ອງ.

## ສະຫຼຸບ

ຫຼັກສູດວິຊາການແພດ ຂອງຄະນະແພດສາດ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ມີຄວາມສອດຄ່ອງຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າ: ດ້ານບໍລິບົດ, ດ້ານຂະບວນການ ແລະ ດ້ານຜົນຜະລິດ ມີຄວາມສອດຄ່ອງຢູ່ໃນລະດັບຫຼາຍ. ສ່ວນດ້ານປັດໄຈນຳເຂົ້າມີຄວາມສອດຄ່ອງຢູ່ໃນລະດັບປານກາງ.

## ຄຳຂອບໃຈ

ຜູ້ເຮັດການຄົ້ນຄວ້າ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງມາຍັງທ່ານ ອະທິການບໍດີ, ມຊ. ຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງມາຍັງຜູ້ຮ່ວມການຄົ້ນຄວ້າ ທັງ 2 ທ່ານ ທີ່ໄດ້ຊອກຫາຄົ້ນຄວ້າບົດຄວາມຕ່າງໆ ແລະ ຖ່າຍທອດຄວາມຮູ້ໃຫ້ແກ່ຂ້າພະເຈົ້າໂດຍດີຕະຫຼອດມາ. ຂໍສະແດງຄວາມຂອບໃຈມາຍັງການຈັດຕັ້ງທຸກພາກສ່ວນທີ່ໄດ້ໃຫ້ຄວາມຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກໃນດ້ານຕ່າງໆ ຕະຫຼອດໄລຍະຂອງການສຶກສາໃນຄັ້ງນີ້.

## ຂໍ້ຄັດແຍ້ງ

ການສຶກສາຄັ້ງນີ້ແມ່ນໄດ້ຂຽນຂຶ້ນດ້ວຍຕົນເອງ ແລະ ໄດ້ຮັບການກວດແກ້ຈາກອາຈານທີ່ປຶກສາທັງ 2 ທ່ານ, ພ້ອມດ້ວຍຄະນະບໍດີ ຄະນະສຶກສາສາດ ແລະ ຜູ້ກວດສອບທັງ 3 ທ່ານ, ສຳລັບການສຶກສານີ້ແມ່ນບໍ່ມີຂໍ້ຂັດແຍ້ງໃດໆກັບຈັນຍາທຳທາງດ້ານການແພດ.

## ເອກະສານອ້າງອີງ

1. ກະຊວງສາທາລະນະສຸກ (2011) ແຜນຍຸດທະສາດ ນະຄອນຫຼວງວຽງຈັນ.
2. ກະຊວງສາທາລະນະສຸກ (2014) ແຜນຍຸດທະສາດ ກະຊວງສາທາລະນະສຸກ, ນະຄອນຫຼວງວຽງຈັນ.
3. ກະຊວງສຶກສາທິການ ແລະ ກິລາ (2016) ກົດໝາຍການສຶກສາ. ນະຄອນຫຼວງວຽງຈັນ, ກະຊວງສຶກສາທິການ ແລະ ກິລາ
4. ບຸນລ້ຽງ ທຸມທອງ (2015) ການພັດທະນາຫຼັກສູດ. ກຸງເທບ ສຳນັກພິມແຫ່ງມະຫາຈຸລາລົງກອນ.
5. ອຸໄທ ບຸນປະເສີດ (2015) ຫຼັກສູດ ແລະ ການບໍລິຫານວິຊາການ ຂອງໂຮງຮຽນ. ກຸງເທບ ໂຮງພິມເອສດີເພສ
6. ໃຈທິບ ເຊື້ອລັດຕະນະພົນ (2016) ການພັດທະນາຫຼັກສູດ ຫຼັກການ ແລະ ແນວປະຕິບັດ. ກຸງເທບ ໂຮງພິມອາລີເພດ.
7. UNESCO Institute for Lifelong Learning (2017) ນະໂຍບາຍ ແລະ ຍຸດທະສາດການຮຽນຮູ້ຕະຫຼອດຊີວິດ ສະບັບທີ່ 4, ນະຄອນຫຼວງວຽງຈັນ.

# Evaluation of the Medicine Curriculum at the Faculty of Medicine, University of Health Sciences, Using the CIPP Model

Bounkhong Khanthaxay[1], Khamseng Thalangsy[2], Khammerng Sybounheang[2], Vanhpheng Chanphothong[1]

1. Institute of Research and Education Development, University of Health Sciences, Lao PDR
2. Faculty of Education, National University of Laos, Vientiane Capital, Lao PDR

Received 12 November 2021; received in revised form 09 June 2022; accepted for publication 15 September 2022

## Abstract

**Background and rationale**: The development of skilled staff is the main function of the medical education system, which is the process of building people with knowledge, skills, wisdom, ability to analyze, know how to solve problems, ability to learn by themselves and adapt to changes in the regional-international environment.

**Objective:** The study aimed to evaluate the consistency of context, input, process and product of medical curriculum, Faculty of Medicine, University of Health Sciences by using the Context Input Process and Product (CIPP) model evaluation.

**Methodology:** This study was cross-sectional descriptive study of medical student years 5 to 6, managers and teachers. Data were collected by using questionnaires in face-to-face interviews. The data were entered in Epi-data with analysis by SPSS.

**Results:** 1). Contextually, the curriculum philosophy, objectives of curriculum, structure of curriculum and learning contents of each course were regarded as consistent at high level. 2). Regarding the input teaching, students and learning – teaching materials/equipment, pocket book and places were consistent at moderate levels. 3). Considering the process, the curriculum administration, the learning – teaching management, the evaluation and assessment were consistent at high level and 4). for products, the behavior, attitude, virtue and ethical national of professional, communication skill and relationship, basic knowledge, clinic skill, check-up skill by using basic tools and improve of professional knowledge were consistent at high level.

**Conclusion:** The medical curriculum of the Faculty of Medicine at the University of Health Sciences is consistent at high levels. When considering each aspect, it can be seen that: the context, the process and the product are consistent at high levels. In terms of input factors, there is consistency at a moderate level.

**Copyright:** © 2022 Khanthaxay *et al*. This is an open-access article distributed under the terms of the Creative Commons Attribution Licence, which permits unrestricted use, distribution, and reproduction in any medium, provided the original author and source are credited.

**Keywords:** Medicine curriculum evaluation, Faculty of Medicine, CIPP model

***Corresponding author:** Bounkhong Khanthaxay, Tel: +85620 5546 2869, E-mail: tuytip25@gmail.com